**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ພະແນກສາທາລະນະສຸກແຂວງ ເລກທີ 1515 /ສທຂ

ແຂວງສະຫວັນນະເຂດ,ວັນທີ 01 ເມສາ 2026

# ແຈ້ງເຊີນ

**ເຖິງ: ບໍລິສັດ ກໍ່ສ້າງ (ພາຍໃນແຂວງສະຫວັນນະເຂດ ແລະ ຕ່າງແຂວງ).**

**ເລື່ອງ: ເຂົ້າຮ່ວມການປະມູນໂຄງການ ຕໍ່ເຕີມ-ສ້ອມແປງ ຫ້ອງການສາທາລະນະສຸກ ເມືອງພະລານໄຊ ແຂວງສະຫວັນນະເຂດ**

- ອີງຕາມ ຂໍ້ຕົກລົງວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງພະແນກສາທາລະນະສຸກແຂວງສະຫວັນນະເຂດ, ສະບັບເລກທີ 1492/ສທ, ລົງວັນທີ 10 ກໍລະກົດ 2023;
- ອີງຕາມ ຂໍ້ຕົກລົງຂອງ ຄະນະກໍາມະການປົກຄອງແຂວງ ວ່າດ້ວຍການຈັດຕັ້ງປະຕິບັດໂຄງການ, ສະບັບເລກທີ 380/ຄປຂ, ລົງວັນທີ 19 ມີນາ 2026;

1. ພະແນກສາທາລະນະສຸກແຂວງສະຫວັນນະເຂດ ໄດ້ຮັບທຶນ: **ງົບປະມານການລົງທຶນຂອງລັດ ພາກປົກກະຕິ ປະຈໍາປີ 2026**
2. ການປະມູນສົມທຽບລາຄາ ຈະດໍາເນີນຕາມຂັ້ນຕອນທີ່ໄດ້ກໍານົດໄວ້ຢູ່ໃນກົດໝາຍວ່າດ້ວຍການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ, ສະບັບເລກທີ 30/ສພຊ, ລົງວັນທີ 02 ພະຈິກ 2017, ຄໍາແນະນໍາກ່ຽວກັບການຈັດຕັ້ງປະຕິບັດກົດໝາຍວ່າດ້ວຍການຈັດຊື້ຈັດຈ້າງດ້ວຍທຶນຂອງລັດ, ສະບັບເລກທີ 0477/ກງ, ລົງວັນທີ 13 ກຸມພາ 2019 ແລະ ຄໍາແນະນາເພີ້ມເຕີມສາລັບ ມາດຕາ 23 ແລະ ມາດຕາ 31 ຂອງຄໍາແນະນາການຈັດຕັ້ງປະຕິບັດກົດໝາຍວ່າດ້ວຍການຈັດຊື້ຈັດຈ້າງດ້ວຍທຶນຂອງລັດ, ສະບັບເລກທີ 1995/ກງ, ລົງວັນທີ 24 ມິຖຸນາ 2019.
3. ບໍລິສັດ ທີ່ສົນໃຈສາມາດຕິດຕໍ່ພົວພັນ ລົງທະບຽນຊື້ຊອງປະມູນທີ່ **ຂະແໜງຈັດຊື້-ຈັດຈ້າງ ພະແນກການເງິນ ແຂວງສະຫວັນນະເຂດ**, ໃນໂມງລັດຖະການ, ນັບແຕ່ວັນທີ: **01 ເມສາ 2026** ເປັນຕົ້ນໄປ ເຖິງ ວັນທີ **30 ເມສາ 2026** ເປັນມື້ປິດຂາຍຊອງປະມູນ.
4. ເງື່ອນໄຂຂອງ ບໍລິສັດ ໃນການພົວພັນຊື້ຊອງປະມູນ ປະກອບມີ: ທະບຽນວິສະຫະກິດອອກຊື່ ບໍລິສັດ, ໃບອະນຸຍາດດໍາເນີນທຸລະກິດ 2025-2026, ໃບຢັ້ງຢືນການຊໍາລະອາກອນ 2025-2026.
5. ຊອງປະມູນຕ້ອງສົ່ງທີ່ ຫ້ອງປະຊຸມພະແນກສາທາລະນະສຸກແຂວງ, ກ່ອນເວລາ **9:00 ໂມງ** ຂອງ ວັນທີ **05 ພຶດສະພາ 2026** ແລະ ຊອງປະມູນທຸກໆຊອງຈະໄດ້ເປີດໃນເວລາ **9:30 ໂມງ**, ໂດຍຊ້ອງໜ້າຄະນະກໍາມະການປະມູນ ແລະ ຕົວແທນຂອງຜູ້ເຂົ້າແຂ່ງຂັນປະມູນ.

**ຫົວໜ້າພະແນກສາທາລະນະສຸກແຂວງ**

**ດຣ. ຈັນທະລາ ພານິສິດ**


ຕິດຕໍ່ພົວພັນ:

ທ່ານ ລໍາໄພ ຂັນທະລີ 020 2288 4868, 020 9883 3884